# ຄຳແນະນຳໂດຍທົ່ວໄປກ່ຽວກັບການສອບເສັງພາກທັກສະ

ອ່ານຄຳແນະນຳເຫຼົ່ານີ້ໃນຂະນະທີ່ທ່ານລໍຖ້າເຂົ້າສອບເສັງພາກທັກສະ.
ບັດນີ້ ຕ້ອງ ຖືກສົ່ງກັບຄືນໃຫ້ຜູ້ປະເມີນເຊິ່ງເປັນຜູ້ທີ່ຈະໃຫ້ການສອບເສັງ .

**ເມື່ອທ່ານຖືກເອີ້ນເຂົ້າໄປໃນຫ້ອງສອບເສັງ, ຜູ້ປະເມີນຈະ:**

- ຖາມເບິ່ງບັດປະຈຳຕົວຂອງທ່ານ.
- ນຳທ່ານເລາະເບິ່ງທົ່ວງຫ້ອງ ເພື່ອໃຫ້ທ່ານເຫັນວັດຖຸອຸປະກອນຕ່າງໆ ທີ່ຕ້ອງໃຊ້ໃນການສອບເສັງ.

ສຳລັບການສອບເສັງພາກທັກສະ ທ່ານ ຈະຕ້ອງໄດ້ເຮັດ ສາມ ທັກສະທີ່ທ່ານຈະຕ້ອງໄດ້ປະຕິບັດກັບຄົນເຈັບ. ເມື່ອຕອນທີ່ທ່ານກຳລັງປະຕິບັດທັກສະເຫຼົ່ານີ້ຢູ່ ຜູ້ປະເມີນຈະສັງເກດ ແລະ ບັນທຶກການເຮັດວຽກຂອງທ່ານ. ທັກສະຕ່າງໆຈະຖືກປະຕິບັດ ບໍ່ວ່າຜູ້ສະໝັກຈະກັບຕົວຄົນເຈັບ ຫຼື ກັບຫຸ່ນ. ທ່ານຄວນປິ່ນປົວ ແລະ ເວົ້າກັບຜູ້ສະແດງ ຫຼື ຫຸ່ນ ຄືກັບວ່າລາວແມ່ນຄົນເຈັບແທ້.

**ກ່ອນທ່ານຈະເຮັດບົດເສັງ, ຜູ້ປະເມີນຈະ:**

- ເອົາບັດທີ່ມີລາຍການຂອງທັກສະຕ່າງໆທີ່ທ່ານຈະໃຊ້ເຂົ້າໃນການສອບເສັງ ພ້ອມທັງມີຄຳແນະນຳກັບແຕ່ລະທັກສະ.
- ອ່ານຄຳແນະນຳກ່ຽວກັບທັກສະແຕ່ລະອັນໃຫ້ທ່ານຟັງ. (ຜູ້ແປພາສາຈະຊ່ວຍທ່ານຖ້າທ່ານເຂົ້າສອບເສັງບົດທີ່ບໍ່ແມ່ນພາສາອັງກິດ.)
- ບອກທ່ານວ່າເວລາໃດທ່ານຈຶ່ງຕ້ອງເຮັດບົດສອບເສັງ ແລະ ເມື່ອໃດຈະຕ້ອງສະແດງເປັນຄົນເຈັບໃຫ້ຜູ້ສະໝັກຄົນອື່ນທຳການສອບເສັງ.

**ສຳລັບບົດສອບເສັງພາກທັກສະ, ຄົນເຈັບ:**

- ແມ່ນຖືກພິຈາລະນາວ່າມີຄວາມກຽມພ້ອມທາງສະໝອງ ແລະ ໃຫ້ຄວາມຮ່ວມມື.
- ອາດມີຄວາມຈຳກັດທາງດ້ານຮ່າງກາຍກັບທັກສະບາງອັນ.

**ເມື່ອໄດ້ເອົາຄົນມາສະແດງເປັນຄົນເຈັບ (ບໍ່ແມ່ນຫຸ່ນ), ຄົນງນັ້ນ:**

- ແມ່ນໄດ້ຮັບອະນຸຍາດ ພຽງແຕ່ໃຫ້ສົນທະນາເພື່ອຕອບຄຳຖາມຕ່າງໆຂອງທ່ານ.
- ສາມາດຍ້າຍ ແລະ ຊ່ວຍໃຫ້ຍ້າຍໄດ້.
- ຈະຍ້າຍໄດ້ກໍ່ຕໍ່ເມື່ອຖືກບອກໃຫ້ຍ້າຍເທົ່ານັ້ນ.

**ເມື່ອທ່ານສະແດງບົດບາດເປັນຄົນເຈັບ ທ່ານ:**

- ເປັນຄົນເຈັບທີ່ມີຄວາມລະວັງຕົວທາງດ້ານສະໝອງ ແລະ ໃຫ້ຄວາມຮ່ວມມື ແລະ ເປັນຜູ້ທີ່ສາມາດຍ້າຍ ແລະ ເຮັດຕາມການຊີ້ນຳໄດ້.
- ຄວນຍ້າຍສະເພາະຕອນທີ່ຜູ້ສະໝັກຖາມໃຫ້ຍ້າຍເທົ່ານັ້ນ.
- ຄວນສົນທະນາສະເພາະຕອນທີ່ຜູ້ສະໝັກຖາມໃຫ້ຍ້າຍເທົ່ານັ້ນ.
- ອາດຈະໄດ້ຮັບຄຳແນະນຳພິເສດຈາກຜູ້ປະເມີນກ່ຽວກັບບົດບາດຂອງທ່ານທີ່ເປັນຄົນເຈັບ.
- ອາດຈະບໍ່ຊ່ວຍຜູ້ສະໝັກອື່ນໆດ້ວຍວິທີໃດເລີຍ. ນີ້ລວມມີການໃຫ້ການບອກທາງອ້ອມດ້ວຍການໃຊ້ຄຳສັບ, ສັນຍານ ຫຼື ການສະແດງສີໜ້າຕ່າງໆ. ການປະພຶດປະເພດນີ້ຖືກພິຈາລະນາເປັນການຫຼອກລວງ ແລະ ຜູ້ເຂົ້າຮ່ວມທັງສອງຈະຕ້ອງຖືກລະງັບການສອບເສັງໂດຍປາສະຈາກການໄດ້ຮັບຜົນຂອງການສອບເສັງ. ເຫດການຕ່າງໆຈະຖືກລາຍງານໃຫ້ກົມສາທາລະນະສຸກຂອງວໍຊິງຕັນຮັບຊາບ.

**ນີ້ແມ່ນຈຸດບາງຈຸດໃຫ້ຈື່ໄວ້ໃນທ່ານກຳລັງເຮັດການສອບເສັງພາກທັກສະ:**

- ທ່ານຈຳຕ້ອງປະຕິບັດທັກສະເຫຼົ່ານີ້ຢ່າງແທ້ຈິງ.
- ທ່ານຈຳເປັນຕ້ອງປະຕິບັດທັກສະເຫຼົ່ານີ້ຕາມລຳດັບທີ່ໄດ້ຈັດລຽງໄວ້ໃນບັດຂອງຄຳແນະນຳທີ່ຜູ້ປະເມີນຈະມອບໃຫ້ທ່ານ. ທ່ານອາດຈະຕ້ອງອ່ານບັດຄຳແນະນຳຄືນທຸກໆເວລາໃນລະຫວ່າງການເຮັດບົດເສັງຂອງທ່ານ.

**ປິ້ນບັດກັບຄືນເພື່ອສືບຕໍ່ການອ່ານທາງດ້ານຫຼັງ➔**


Copyright © 2010 Prometric Inc., a Delaware corporation. All rights reserved.

- ອ່ານຄຳແນະນຳຂອງທັກສະແຕ່ລະອັນຢ່າງລະອຽດ ສຳລັບບົດສອບເສັງນີ້, ທ່ານຈະສົມມຸດວ່າ ທ່ານກຳລັງເຮັດວຽກກັບຄົນເຈັບຜູ້ໜຶ່ງໂດຍການໃຊ້ທັກສະທັງໝົດສາມອັນ ເຖິງວ່າຜູ້ສະແດງອາດຈະຫຼິ້ນເປັນຄົນເຈັບກັບທັກສະໜຶ່ງ ແລະ ກັບຫຸ່ນກັບທັກສະອີກອັນໜຶ່ງ. ໃນທັກສະບາງອັນ, ຄຳແນະນຳຈະໃຫ້ຂໍ້ມູນສະເພາະກ່ຽວກັບຄວາມສາມາດ ຫຼື ຄວາມຈຳກັດຂອງຄົນເຈັບ. ຕົວຢ່າງວ່າ ໃນທັກສະການນຸ່ງຖື ຜູ້ສະແດງຈະເຮັດເປັນຄົນເຈັບທີ່ມີຄວາມອ່ອນແອ. ຄວາມຈຳກັດດ້ານຮ່າງກາຍພິເສດນັ້ນໃຊ້ໄດ້ສະເພາະກັບທັກສະການນຸ່ງຖືເທົ່ານັ້ນ. ຄຳແນະນຳພິເສດກ່ຽວກັບດ້ານຄວາມອ່ອນແອ ບໍ່ສາມາດໃຊ້ໄດ້ກັບຄົນເຈັບໃນທັກສະອີກສອງອັນນັ້ນ.
- ວັດຖຸ ແລະ ອຸປະກອນທີ່ຕ້ອງການໃຊ້ກັບທັກສະອື່ນໆແມ່ນຢູ່ໃນຫ້ອງສອບເສັງ. ຖ້າມີບາງສິ່ງບາງຢ່າງທີ່ທ່ານບໍ່ສາມາດຊອກເຫັນໄດ້, ໃຫ້ຖາມຜູ້ປະເມີນ.
- ເມື່ອທ່ານສຳເລັດທັກສະໜຶ່ງແລ້ວ, ບອກວ່າ "ຂ້ອຍເຮັດແລ້ວ"
- ຖ້າທ່ານຄິດວ່າທ່ານໄດ້ເຮັດບົດເສັງຜິດ ໃນລະຫວ່າງທັກສະໜຶ່ງ, ທ່ານຕ້ອງບອກຜູ້ປະເມີນວ່າ ທ່ານກຳລັງຈະກັບໄປເຮັດໃຫ້ມັນຖືກ. ທ່ານອາດຈະແປງຂໍ້ສອບເສັງກັບທັກສະທີ່ທ່ານກຳລັງເຮັດໃຫ້ຖືກໄດ້ເທົ່ານັ້ນ. ເມື່ອໃດທີ່ທ່ານບອກວ່າທ່ານໄດ້ສຳເລັດທັກສະໜຶ່ງແລ້ວ, ທ່ານຈະບໍ່ສາມາດກັບຄືນໄປເຮັດທັກສະນັ້ນໄດ້ອີກແລ້ວ.
- ເມື່ອຜູ້ປະເມີນມອບບັດຄຳແນະນຳໃຫ້ທ່ານ, ລາວຈະບອກທ່ານວ່າ ທ່ານມີເວລາຈັກນາທີເພື່ອເຮັດບົດສອບເສັງນັ້ນ. ຈຳນວນເວລາແມ່ນຂຶ້ນກັບທັກສະຕ່າງໆ. ຜູ້ປະເມີນຈະເລີ່ມນັບເວລາເມື່ອທ່ານເລີ່ມທັກສະທຳອິດ ແລະ ຈະບອກທ່ານອີກເມື່ອຍັງມີເວລາຫ້ານາທີສຸດທ້າຍເຫຼືອຢູ່.
- ເມື່ອທ່ານສິ້ນສຸດທັກສະສຸດທ້າຍ, ໃຫ້ເຂົ້າໃຈວ່າທ່ານໄດ້ດູແລຮັກສາຄົນເຈັບພາຍໃນມື້ນັ້ນແລ້ວ.
- ໃນລະຫວ່າງການເຮັດບົດສອບເສັງ ຖ້າຜູ້ປະເມີນໄດ້ມີຄວາມກັງວົນກ່ຽວກັບຄວາມປອດໄພເປັນຢ່າງຍິ່ງ, ການສອບເສັງພາກທັກສະຈະຖືກຢຸດ ແລະ ກໍ່ຈະຈົບພຽງເທົ່ານັ້ນ.
- ທ່ານກຳລັງເຮັດບົດສອບເສັງຂອງລັດຖະບານຢູ່. ຜູ້ປະເມີນບໍ່ໄດ້ຮັບອະນຸຍາດໃຫ້ຊ່ວຍ ຫຼື ສອນທ່ານ ຫຼື ປຶກສາກ່ຽວກັບການປະຕິບັດບົດສອບເສັງກັບທ່ານ.

**ເມື່ອການເຮັດບົດສອບເສັງຂອງທ່ານສຳເລັດແລ້ວ, ຜູ້ປະເມີນຈະ:**

- ພິມຂໍ້ມູນກ່ຽວກັບຜົນຂອງການເຮັດບົດສອບເສັງຂອງທ່ານ ລົງໃນຄອມພິວເຕີ ເພື່ອໃຫ້ຄະແນນ.
- ມອບໃບລາຍງານຄະແນນໃຫ້ທ່ານ.

**ກົດລະບຽບທົ່ວໄປຂອງການສອບເສັງຄັ້ງນີ້ລວມມີ:**

- ຕ້ອງປິດອຸປະກອນການບັນທຶກ, ໂທລະສັບມືຖື, ເພດເຈີ, PDAs ຫຼື ກ້ອງຖ່າຍຮູບ ແລະ ເກັບໄວ້ໃນລະຫວ່າງການສອບເສັງ.
- ສິ່ງຂອງສ່ວນຕົວທຸກໆອັນທີ່ຕິດຕົວກັບທ່ານມານັ້ນຕ້ອງຖືກເກັບໄວ້ໃນຫ້ອງສອບເສັງ ແລະ ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ໃຊ້ສິ່ງຂອງດັ່ງກ່າວໃນລະຫວ່າງການສອບເສັງ.
- ນີ້ແມ່ນການສອບເສັງແບບປິດປຶ້ມ. ທ່ານຈະບໍ່ໄດ້ຮັບອະນຸຍາດໃຫ້ໃຊ້ ຫຼື ເບິ່ງເຈ້ຍບັນທຶກ, ປຶ້ມ ຫຼື ວາລະສານກ່ຽວກັບຜູ້ສະໝັກໃດໆໃນລະຫວ່າງການສອບເສັງ.
- ໃນລະຫວ່າງການສອບເສັງຈະບໍ່ມີການພັກຜ່ອນ.
- ຖ້າທ່ານບໍ່ໄດ້ລົງທະບຽນເຂົ້າສອບເສັງພາກທັກສະທີ່ພາສາບໍ່ແມ່ນພາສາອັງກິດ, ທ່ານຕ້ອງເວົ້າແຕ່ພາສາອັງກິດເທົ່ານັ້ນໃນລະຫວ່າງການສອບເສັງ ເຖິງວ່າຈະແມ່ນຕອນທີ່ທ່ານກຳລັງເຮັດບົດສອບເສັງ ຫຼື ເຮັດວຽກກັບຄົນເຈັບ.
- ການສອບເສັງຂອງທ່ານຈະຕ້ອງສິ້ນສຸດລົງ ແລະ ທ່ານຈະຕ້ອງຖືກໄລ່ອອກຈາກຫ້ອງເສັງຖ້າການປະພຶດຂອງທ່ານຫາກບໍ່ສຸພາບ ຫຼື ສ້າງຄວາມວຸ້ນວາຍ. ທ່ານຈະຕ້ອງຖືກໄລ່ອອກຈາກຫ້ອງ ຖ້າຜູ້ປະເມີນມີເຫດຜົນໃນການເຊື່ອວ່າ ທ່ານໄດ້ປອມຕົວເປັນຄົນໆໜຶ່ງ ຫຼື ສົງໄສວ່າທ່ານໄດ້ມີການຫຼອກລວງ.

ທ່ານຈະມີໂອກາດຖາມຄຳຖາມກ່ຽວກັບ ຄຳແນະນຳຫຼັງຈາກທີ່ຜູ້ປະເມີນ ໄດ້ໃຫ້ທ່ານທຳຄວາມຮູ້ຈັກກັບຫ້ອງສອບເສັງແລ້ວ.


Copyright © 2010 Prometric Inc., a Delaware corporation. All rights reserved.